Savan PAD ຈົດໝາຍແຈ້ງຂ່າວ

28 ກຸມພາ, 2022

24

# ການພັດທະນາກະສິກໍາແບບມີສ່ວນຮ່ວມ (ພີເອດີ) ແມ່ນຫຍັງ?

ໃນສະບັບນີ້,ເຮົາຈະມາອະທິບາຍຫຼັກການ ແລະ ປະເດັນທີ່ເນັ້ນໃນ "ການພັດທະນາກະສິກໍາແບບມີສ່ວນຮ່ວມ (ພີເອດີ)," ເຊິ່ງເປັນພື້ນຖານຂອງ Savan PAD.

## ແຜນວາດຮູບແບບຂອງ ພີເອດີ




### ຫຼັກການ

**ການມີສ່ວນຮ່ວມ 1** – ຊາວກະສິກອນມີສ່ວນຮ່ວມໃນການຕັດສິນໃຈກ່ຽວກັບກິດຈະກໍາຂອງພວກເຂົາ.

**ການມີສ່ວນຮ່ວມ 2** – ພະນັກງານລັດຖະກອນມີສ່ວນຮ່ວມໃນການສົ່ງເສີມກິດຈະກໍາຂອງຊາວກະສິກອນ.

**ການມີສ່ວນຮ່ວມ 3** – ພາກສ່ວນເອກະຊົນ ແລະ ສະຖາບັນການເງິນມີສ່ວນຮ່ວມໃນການສົ່ງເສີມກິດຈະກໍາຂອງຊາວກະສິກອນ.

## ● ແນວຄວາມຄິດພື້ນຖານຂອງ ພີເອດີ

- ການພັດທະນາກະສິກໍາແບບມີສ່ວນຮ່ວມ (ພີເອດີ) ແມ່ນຮູບແບບການພັດທະນາກະສິກໍາໂດຍການຮ່ວມມືຂອງຊາວກະສິກອນ ແລະ ລັດຖະບານ (ແລະ ພາກສ່ວນອື່ນໆ).
- ຈຸດປະສົງແມ່ນເພື່ອເພີ່ມສະມັດຕະພາບ ແລະ ລາຍຮັບຂອງຊາວກະສິກອນໂດຍ 3 ວຽກງານຕົ້ນຕໍຄື **ດ້ານຊົນລະປະທານ**, **ດ້ານການປູກເຂົ້າ** ແລະ **ດ້ານການຕະຫຼາດ / ການປູກພືດສວນ**.
- ແຕ່ລະພະແນກການໃນແຂວງ, ສະຖາບັນການເງິນ ແລະ ພາກສ່ວນເອກະຊົນສົມທົບສະໜັບສະໜູນ 3 ວຽກງານດັ່ງກ່າວ.
- ໃຫ້ຈື່ 3 ຫຼັກການ **"ການມີສ່ວນຮ່ວມ"** ໄວ້ສະເໝີ ເພື່ອຈັດຕັ້ງປະຕິບັດກິດຈະກໍາ
- ວິທີການທີ່ຊ່ວຍກະຕຸກຊຸກຍູ້ການກະສິກໍາຂອງທ້ອງຖິ່ນນີ້ ເອີ້ນວ່າ "ພີເອດີ".

ຜູ້ຈັດຕັ້ງປະຕິບັດ ພີເອດີ ຢູ່ ສະຫວັນນະເຂດ
||
ສະຫວັນ ພີເອດີ

## ● 3 ວຽກງານຕົ້ນຕໍ (=ຈຸດເນັ້ນ)



**ດ້ານຊົນລະປະທານ**

ແນໃສ່ການປັບປຸງການດຳເນີນງານ ແລະ ບຳລຸງຮັກສາ ລະບົບຊົນລະປະທານ ໂດຍສຸມໃສ່:

1) ສ້າງຄວາມເຂັ້ມແຂງໃຫ້ອົງກອນຜູ້ນຳໃຊ້ນ້ຳຫຼື ກຸ່ມຜູ້ນຳໃຊ້ນ້ຳ
2) ການຂະຫຍາຍເນື້ອທີ່ຫົດ



**ດ້ານການປູກເຂົ້າ**

ແນໃສ່ການເພີ່ມການຜະລິດເຂົ້າໂດຍ:

1) ການນຳສະເໜີປະຕິທິນການປູກເຂົ້າ
2) ແນະນຳການໃຊ້ເມັດພັນທີ່ມີຄຸນນະພາບ ແລະ ການຄັດເລືອກເມັດພັນ
3) ການປັບປຸງການໃສ່ຝຸ່ນວິທະຍາສາດ
4) ມາດຕະການຄວບຄຸມແມງໄມ້ ແລະ ພະຍາດ

ສະຫວັນ ພີເອດີ ກຳລັງຈັດຕັ້ງປະຕິບັດນະໂຍບາຍໃຫ້ກູ້ຢືມເມັດພັນເຂົ້າ ແລະ ປຸ໋ຍ ແລະ ເກັບເງິນຄືນພາຍຫຼັງການເກັບກ່ຽວ. ເຊິ່ງລວມມີເຕັກນິກເຫຼົ່ານີ້ ນຳ.

**ດ້ານການຕະຫຼາດ / ການປູກພືດສວນ**

ແນໃສ່ການເພີ່ມການຂາຍພືດສວນໂດຍ:

1) ປັບປຸງເຕັກນິກການປູກພືດສວນໃນການຜະລິດຕາມຄວາມຕ້ອງການຂອງຕະຫຼາດ
2) ການສົ່ງເສີມການຂາຍ ໂດຍການຮ່ວມມືກັບຜູ້ປະກອບການ
3) ການຈັດການໆເຮັດສວນ



**FAQ**

***ຮູບແບບ ພີເອດີ ສາມາດນຳໃຊ້ໄດ້ກັບວຽກງານອື່ນບໍ່?***

ມັນສາມາດນຳໄປປະຍຸກໃຊ້ກັບວຽກງານດ້ານອື່ນໆໄດ້ ຖ້າວ່າປະຕິບັດຕາມແນວຄວາມຄິດພື້ນຖານຂອງ ພີເອດີ ທີ່ໄດ້ກ່າວມາຂ້າງເທິງ. ມັນຍັງສາມາດນຳໃຊ້ເຂົ້າໃນວຽກງານລ້ຽງສັດ, ລ້ຽງປາ, ປ່າໄມ້ ແລະ ວຽກງານດ້ານອື່ນໆຂອງຂະແໜງກະສິກຳ.

## ● ການຊ່ວຍເຫຼືອຈາກລັດຖະບານ ແລະ ຂະແໜງການອື່ນ

**ການຮ່ວມມືລະຫວ່າງພາກສ່ວນຕ່າງໆ**

- ພາກສ່ວນທີ່ກ່ຽວຂ້ອງຮ່ວມມືກັນເພື່ອສະໜັບສະໜຸນ, ຂະຫຍາຍ ແລະ ເຮັດໃຫ້ກິດຈະກຳຂ້າງເທິງມີຄວາມຍືນຍົງ.
- ຮັບຜິດຊອບໃນການວາງນະໂຍບາຍການເຄື່ອນໄຫວ, ສະໜັບສະໜູນງົບປະມານ, ການຂະຫຍາຍໄປສູ່ໃນຂົງເຂດອື່ນ, ແລະ ອື່ນໆ.
- ສະຫວັນ ພີເອດີ ໄດ້ສ້າງຕັ້ງຄະນະໜຶ່ງເອີ້ນວ່າຄະນະສົ່ງເສີມກະສິກຳແບບມີສ່ວນຮ່ວມ (ພີເອພີຊີ) ປະກອບດ້ວຍ 4 ພະແນກການອ້ອມຂ້າງ.
- ໃນໄລຍະຕໍ່ໄປຄາດວ່າຈະນຳເອົາກຸ່ມອື່ນໆເຂົ້າມາມີສ່ວນຮ່ວມ (ສະຖາບັນການເງິນ, ອົງກອນບໍ່ຂຶ້ນກັບລັດຖະບານ ແລະ ພາກສ່ວນເອກະຊົນ, ອື່ນໆ).

**ພີເອພີຊີ**

**4 ພະແນກການຂັ້ນແຂວງ:**

- ກະສິກຳ ແລະ ປ່າໄມ້
- ແຜນການ ແລະ ການລົງທຶນ
- ອຸດສາຫະກຳ ແລະ ການຄ້າ
- ການເງິນ

\+

- ສະຖາບັນການເງິນ
- ອົງກອນບໍ່ຂຶ້ນກັບລັດຖະບານ
- ພາກສ່ວນເອກະຊົນ, ອື່ນໆ.

ຈົດໝາຍແຈ້ງຂ່າວຂອງໂຄງການ ສະຫວັນເພັດ
ໂຄງການພັດທະນາ ກະສິກຳ ແບບມີສ່ວນຮ່ວມ ແຂວງສະຫວັນນະເຂດ (ສະຫວັນເພັດ)
ຕູ້ ປ.ນ. 16, ຂະແໜງຊົນລະປະທານ, ພະແນກ ກະສິກຳ ແລະ ປ່າໄມ້ ແຂວງສະຫວັນນະເຂດ, (ໂທ : 041-252497)